## ການປົກປັກຮັກສາ ແລະ ບູລິມະສິດອັນສຳຄັນ ເພື່ອການຈັດຕັ້ງປະຕິບັດກິດຈະກຳໃນເຂດ ດິນບໍລິເວນນໍ້າຣາມຊາ ເຊຈຳພອນ

ໄພຂົ່ມຂູ່ທີ່ສຳຄັນ ຕໍ່ກັບການປົກປັກຮັກສາດິນບໍລິເວນນໍ້າ ລວມມີ: ການທຳລາຍປ່າໄມ້ແຄມນໍ້າ ທີ່ຢູ່ອ້ອມແອ້ມດິນບໍລິເວນນໍ້າ; ການຂະຫຍາຍພື້ນທີ່ກະສິກຳ; ການຄຸກຄາມສັດສາວາສິ່ງ; ການນຳໃຊ້ຝຸ່ນເຄມີ ແລະ ຢາປາບສັດຕູພືດ. ນອກຈາກນີ້, ການເພີ້ມຂື້ນຂອງພົນລະເມືອງ ກໍ່ໄດ້ນຳໄປສູ່ການຂະຫຍາຍເນື້ອທີ່ດ້ານກະສິກຳ ແລະ ການພັດທະນາພື້ນຖານໂຄງລ່າງ ກໍ່ໄດ້ເພີ້ມທະວີຄວາມກົດດັນ ດ້ານການອະນຸລັກຮັກສາດິນບໍລິເວນນໍ້າແຫ່ງນີ້.

ກິດຈະກຳທີ່ເປັນບູລິມະສິດ ສຳລັບການອະນຸລັກດິນບໍລິເວນນໍ້າ ລວມມີ ການກຳນົດແຜນທີ່ ແລະ ຂອບເຂດ ແບບມີສ່ວນຮ່ວມ (ລວມມີ ການສ້າງເຂດສະຫງວນ) ແລະ ການທົບທວນຄືນດ້ານລະບຽບການທີ່ກ່ຽວຂ້ອງ ເພື່ອໃຊ້ເຂົ້າໃນການສ້າງແຜນຄຸ້ມຄອງ ແລະ ຈັດສັນພື້ນທີ່ແຫ່ງນີ້. ກິດຈະກຳເພ^ອປູກຈິດສຳນຶກໃຫ້ແກ່ຊຸມຊົນ ຄວນຈະໄດ້ຮັບການຈັດຕັ້ງປະຕິບັດ, ພາຍຫຼັງທີ່ໄດ້ມີແຜນຄຸ້ມຄອງ ແລະ ຈັດສັນໃນໄລຍະຍາວ ສຳລັບດິນບໍລິເວນນໍ້າແຫ່ງນີ້.

## ເປົ້າໝາຍສຳລັບແຜນບໍລິຫານຄຸ້ມຄອງເຂດດິນບໍລິເວນນໍ້າ ຣາມຊາ ເຊຈຳພອນ

ເພື່ອການປົກປັກຮັກສາເຂດດິນບໍລິເວນນໍ້າ ໂດຍອີງຕາມແນວຄວາມຄິດໃນການນຳໃຊ້ທີ່ຊານສະຫຼາດ. ຕາມສົນທິສັນຍາຣາມຊາໄດ້ໃຫ້ນິຍາມ ການນຳໃຊ້ດິນບໍລິເວນນໍ້າທີ່ຊານສະຫຼາດໄວ້ວ່າ “ໃຫ້ຮັກສາຄຸນຄ່າຂອງມັນຄືເກົ່າ, ສາມາດ ບັນລຸເປົ້າໝາຍ ໂດຍຜ່ານການຈັດຕັ້ງປະຕິບັດຮູບແບບ ຂອງລະບົບນິເວດວິທະຍາ, ພາຍໃຕ້ເງື່ອນໄຂການພັດທະນາທີ່ຍືນຍົງ”, ໃນກໍລະນີຂອງ ເຂດດິນບໍລິເວນນ້ຳຣາມຊາເຊຈຳພອນນັ້ນແມ່ນມີ ຄວາມໝາຍວ່າການບໍລິຫານຄຸ້ມຄອງຄວນຈະຖືເອົາການປ້ອງກັນໄພແຫ້ງແລ້ງ ແລະ ໄພນໍ້າຖ້ວມເປັນສຳຄັນ ລວມທັງການຟື້ນຟູທີ່ຢູ່ອາໃສ ແລະ ການຄຸ້ມຄອງສັດນໍ້າທຸກຊະນິດ.



**ອົງການສາກົນ ເພື່ອການອະນຸລັກທຳມະຊາດ**

ຫ້ອງການປະຈຳ ສສປ ລາວ
082/01 ຖະໜົນ ຟ້າງຸ່ມ, ບ້ານ ວັດຈັນ
ຕູ້ປ.ນ 4340
ໂທລະສັບ: + 856 21 216401
ແຟັກ: + 856 21 216127
www.iucn.org/lao

# ດິນບໍລິເວນນໍ້າ ເຊຈຳພອນ ເຂດຣາມຊາ ໃນ ສປປ ລາວ ຕັ້ງແຕ່ເດືອນ ກັນຍາ 2010





## ຄວາມເປັນມາ

ດິນບໍລິເວນນ້ຳ ເຊຈຳພອນ ແມ່ນຕັ້ງຢູ່ໃນແຂວງ ສະຫວັນນະເຂດ ທາງພາກກາງຂອງ ສປປ ລາວ ເຊິ່ງເປັນ ເຂດທົ່ງພຽງທີ່ກວ້າງໃຫຍ່ ແລະ ລວມມີພືດພັນຫຼາຍຊະນິດ ແລະ ມີແມ່ນ້ຳທີ່ຂື້ນນຳລະດູການ ເຊັ່ນດຽວກັນກັບ ອ່າງນ້ຳຂັງ, ໜອງ, ບຶງ ແລະ ທົ່ງນາ ທີ່ຢາຍກັນຢູ່ຢ່າງກະແຈກກະຈາຍ. ສິ່ງເຫຼົ່ານີ້ໄດ້ມີການເຊື່ອມຕໍ່ຫາກັນໃນຊ່ວງລະດູຝົນ, ແລະ ດິນບໍລິເວນນ້ຳທີ່ມີຄວາມສະຫຼັບສັບຊ້ອນແຫ່ງນີ້ ກໍ່ຍັງເຊື່ອມຕໍ່ກັບດິນບໍລິເວນນ້ຳແຫ່ງອື່ນໆ. ທາງດ້ານເໜືອຂອງເມືອງ ເຊຈຳພອນ ລວມມີທົ່ງນາ ແລະ ອ່າງເກັບນ້ຳຂະໜາດໃຫຍ່ 2 ແຫ່ງ, ສ່ວນຢູ່ທາງໃຕ້ລວມມີບັນດາພືດຊະນິດຕ່າງໆທີ່ມີຄວາມຫຼາກຫຼາຍເຊັ່ນ ປ່າໄມ້ແຄມນ້ຳ ພ້ອມກັບພຸ່ມໄມ້ ແລະ ຫຍ້າຫຼາຍໆຊະນິດ.

ດິນບໍລິເວນນ້ຳ ເຊຈຳພອນ ມີຄຸນຄ່າທີ່ສຳຄັນຢ່າງຫຼວງຫຼາຍດ້ານການອະນຸລັກ ອັນເນື່ອງມາຈາກຄວາມຫຼາກ ຫຼາຍທາງດ້ານຊີວະນາໆພັນ. ມັນໄດ້ກາຍເປັນແຫຼ່ງທີ່ຢູ່ອາໃສຂອງສັດທີ່ໃກ້ຈະສູນພັນຫຼາຍຊະນິດເຊັ່ນ ປາຝາ, ແຂ້, ເຕົ່າຫວາຍ ແລະ ເຕົ່າຫາງຍາວ. ນອກຈາກນີ້ ມັນຍັງເປັນແຫຼ່ງທຳມາຫາກິນຂອງປະຊາຊົນປະມານ 42,000 ຄົນອີກດ້ວຍ.

## ທີ່ຕັ້ງ

ພື້ນທີ່ທັງໝົດຂອງດິນບໍລິເວນນ້ຳ ເຊຈຳພອນມີປະມານ 12,400 ເຮັກຕາ (ສອງສ່ວນສາມຂອງພື້ນທີ່ແມ່ນຂື້ນກັບເມືອງ ຈຳພອນ ແລະ ສ່ວນທີ່ເຫຼືອເປັນຂອງເມືອງ ຊົນບູລີ). ສ່ວນເມືອງທີ່ຢູ່ໃກ້ຄຽງຄືເມືອງ ອາດສະພອນ ແລະ ອາດສະພັງທອງ ກໍ່ໄດ້ນຳໃຊ້ດິນບໍລິເວນນ້ຳແຫ່ງນີ້ເຊັ່ນດຽວກັນ.




## ການບໍລິຫານປົກຄອງ ແລະ ພົນລະເມືອງ

ໃນຈຳນວນພື້ນທີ່ອ່າງເກັບນ້ຳ 12,400 ເຮັກຕາ, 1,500 ເຮັກຕາໄດ້ຖືກກຳນົດໃຫ້ເປັນເຂດສະຫງວນເດັດຂາດ, ໂດຍສະເພາະ ພາຍຫຼັງທີ່ມັນໄດ້ຖືກກຳນົດໃຫ້ເປັນເຂດອະນຸລັກສຳລັບແຂ້. ເຂດສະຫງວນ ດັ່ງກ່າວປະກອບມີປະມານ 20 ບ້ານທີ່ອາໃສຢູ່ພາຍໃນ ແລະ ອີກປະມານ 24 ບ້ານແມ່ນອາໃສຢູ່ຕາມອ້ອມແອ້ມເຂດເຊື່ອມຕໍ່ ຊາຍແດນ. ໃນຈຳນວນນີ້ 44 ບ້ານແມ່ນດຳລົງຊີວິດ ໂດຍອາໃສການບໍລິການຈາກລະບົບນິເວດວິທະຍາ ຈາກ ດິນບໍລິເວນນ້ຳດັ່ງກ່າວເປັນຫຼັກ, ດິນບໍລິເວນນ້ຳໄດ້ໃຫ້ການຊ່ວຍເຫຼືອ ດ້ານການດຳລົງຊີວິດ ແລະ ການເປັນຢູ່ຂອງຊຸມຊົນ ເຊິ່ງລວມທັງໝົດມີປະມານ 42,000 ກວ່າຄົນ (ໃນນັ້ນ 26,000 ກວ່າຄົນແມ່ນແມ່ຍິງ).

## ຄຸນຄ່າ ແລະ ຄວາມສຳຄັນຂອງເຂດດິນບໍລິເວນນ້ຳ ເຊຈຳພອນ

ດິນບໍລິເວນນ້ຳ ເຊຈຳພອນແມ່ນການປະສົມປະສານລະຫວ່າງ ລະບົບນິເວດວິທະຍາທີ່ເກີດຂື້ນໂດຍທຳມະຊາດ ແລະ ຈາກການສ້າງອ່າງເກັບນ້ຳໂດຍມະນຸດ (ອ່າງເກັບນ້ຳສຸຍ ຫຼື ບັກ). ຊຸມຊົນທ້ອງຖິ່ນຈຳນວນ 42,000 ກວ່າຄົນໄດ້ເພິ່ງພາອາໃສດິນບໍລິເວນນ້ຳແຫ່ງນີ້ເພື່ອໃຊ້ເປັນແຫຼ່ງຊັບພະຍາກອນນ້ຳ, ລະບົບຊົນລະປະທານ, ອາຫານສຳລັບຄົນ ແລະ ສັດລ້ຽງ, ນອກນັ້ນດິນບໍລິເວນນ້ຳ ແຫ່ງນີ້ຍັງໃຫ້ການບໍລິການດ້ານ ນິເວດວິທະຍາອື່ນໆອີກດ້ວຍ. ການບໍລິການ ໂດຍລວມຂອງດິນບໍລິເວນນ້ຳແຫ່ງນີ້ ສາມາດສະຫຼຸບໄດ້ດັ່ງນີ້:

**•ການສະໜອງ:**

ປາ ແລະ ພືດສາມາດໃຊ້ເປັນອາຫານ; ປ່ານ້ຳຖ້ວມຕາມລະດູການສະໜອງໄຍອາຫານ ແລະ ຟືນ; ຊ່ວຍສະ ໜັບສະໜູນໃນການເຮັດສວນຄົວ ຕາມແຄມນ້ຳ ແລະ ການລ້ຽງສັດ.

**•ການຄວບຄຸມ:**

ນ້ຳ ແລະ ສາຍນ້ຳຊ່ວຍລະບົບນ້ຳໃຕ້ດິນ, ການເກັບກັກອາຍກາກໂບນິກ ແລະ ລະບົບຊົນລະປະທານສຳລັບ ການຜະລິດກະສິກຳ (ປູກເຂົ້າ ແລະ ພືດຜັກ).

**•ວັດທະນະທຳ:**

ແຂ້, ລິງ ແລະ ເຕົ່າທີ່ອາໃສຢູ່ໃນເຂດດິນບໍລິເວນນ້ຳແຫ່ງນີ້ ຖືໄດ້ວ່າເປັນສັດສັກສິດ ເຊິ່ງຈະໄດ້ຮັບ ຄວາມເຄົາລົບນັບຖື ແລະ ໄດ້ຮັບການອະນຸລັກຈາກຊຸມຊົນທ້ອງຖິ່ນ ໃນຫຼາຍເຊັ່ນຄົນມາແລ້ວ. ໃນແຕ່ລະປີຈະມີນັກທ່ອງທ່ຽວປະມານ 10,000 ກ່ວາຄົນທີ່ເດີນທາງເຂົ້າມາທ່ຽວຊົມດິນບໍລິເວນນ້ຳແຫ່ງນີ້ເຊັ່ນ ໄປເບິ່ງໜອງເຕົ່າ, ວັດຕະແຫຼວ, ທຳໄຕ, ປ່າລີງ ແລະ ອ່າງເກັບນ້ຳສຸຍທີ່ສ້າງຂື້ນໂດຍມະນຸດ, ເຊິ່ງທັງໝົດນັ້ນໄດ້ສ້າງລາຍຮັບເພີ່ມເຕີມ ໃຫ້ແກ່ຊຸມຊົນທ້ອງຖິ່ນ.

**•ການສະໜັບສະໜູນ:**

ການອົບພະຍົບຂອງປາໄດ້ຜ່ານເຂົ້າມາພື້ນທີ່ນີ້ເພື່ອວາງໄຂ່; ແຫຼ່ງນ້ຳຂັງທຳມະຊາດຊ່ວຍເປັນທີ່ຢູ່ອາໃສຂອງປາ ແລະ ສັດນ້ຳຫຼາຍຊະນິດໃນຊ່ວງລະດູແລ້ງ; ວົງຈອນຂອງສານອາຫານ; ເປັນບ່ອນຍຶດສຳລັບຕະກອນ ແລະ ເປັນບ່ອນວາງໄຂ່ສຳລັບປາ.